**ມິຊຊາອາທິດທີ 32 ກຳນົດທຳມະດາ**

**ວັນທີ 6 ພະຈິກ 2022**



**ພຣະວໍລະສານໂດຍນັກບຸນລູກາ 20, 27-38**

ໃນເວລານັ້ນ, ພວກຊາດູເຊອັນແມ່ນພວກທີ່ປະຕິເສດວ່າບໍ່ມີການກັບເປັນຄືນມາ, ເຂົ້າມາຖາມພຣະເຢຊູເຈົ້າວ່າ: ພຣະອາຈານ, ທ່ານໂມແຊໄດ້ບັນຍັດໄວ້ວ່າດັ່ງນີ້ຄື ຖ້າຊາຍຄົນໃດມີພັນລະຍາແລ້ວຕາຍໄປໂດຍບໍ່ມີລູກ ກໍໃຫ້ນ້ອງຊາຍຂອງເຂົາເອົານາງໝ້າຍນັ້ນມາເປັນພັນລະຍາເພື່ອໃຫ້ເກີດລູກສືບຕະກູນຂອງອ້າຍຕໍ່ໄປ. ຍັງມີອ້າຍນ້ອງເຈັດຄົນ: ອ້າຍຜູ້ກົກແຕ່ງງານແລ້ວກໍຕາຍໂດຍບໍ່ມີລູກ. ນ້ອງຊາຍຜູ້ທີສອງ, ນ້ອງຊາຍຜູ້ທີສາມຈົນຮອດຜູ້ທີເຈັດກໍໄດ້ແຕ່ງງານກັບນາງໝ້າຍນັ້ນ, ແລ້ວກໍຕາຍໄປໝົດໂດຍບໍ່ມີລູກ. ທ້າຍສຸດ, ຍິງນັ້ນກໍຕາຍດ້ວຍ. ດັ່ງນີ້ເມື່ອວັນກັບເປັນຄືນມາ, ຍິງນັ້ນຈະເປັນພັນລະຍາຂອງຜູ້ໃດ? ຍ້ອນວ່າທັງເຈັດຄົນກໍໄດ້ແຕ່ງງານກັບນາງ.

ພຣະເຢຊູເຈົ້າຊົງຕອບວ່າ: ລູກຫລານຂອງໂລກນີ້ແຕ່ງງານກັນແຕ່ພວກທີ່ສົມຈະມີສ່ວນໃນໂລກໜ້າແລະການກັບເປັນຄືນມາຈາກພວກຜູ້ຕາຍນັ້ນຈະບໍ່ແຕ່ງງານກັນດອກ. ຍ້ອນວ່າພວກເຂົາຈະບໍ່ຕາຍອີກ ຈະເປັນດັ່ງພວກເທວະດາແລະເປັນບຸດຂອງພຣະເຈົ້າ. ຍ້ອນວ່າໄດ້ກັບເປັນຄືນມາແລ້ວ.

ສ່ວນເລື່ອງທີ່ວ່າພວກຜູ້ຕາຍຈະຕ້ອງກັບເປັນຄືນມານັ້ນ, ໂມແຊກໍໄດ້ກ່າວໄວ້ແລ້ວໃນເລື່ອງພຸ່ມໄມ້ເມື່ອທ່ານຮຽກພຣະອົງເຈົ້າວ່າ ພຣະເຈົ້າຂອງອາບຣາຮາມ, ພຣະເຈົ້າຂອງອີຊາອັກ ແລະພຣະເຈົ້າຂອງຢາກ໊ອບ. ນັ້ນແລ ພຣະອົງບໍ່ແມ່ນພຣະເຈົ້າຂອງພວກຄົນຕາຍ, ແຕ່ແມ່ນພຣະເຈົ້າຂອງພວກຄົນເປັນ. ຍ້ອນວ່າທຸກຄົນມີຊີວິດຕໍ່ໜ້າພຣະອົງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າວັນອາທິດນີ້ໃນເດືອນພະຈິກອັນແມ່ນເດືອນຊຶ່ງພຣະກຣິສຕະຈັກເຊື້ອເຊີນພວກເຮົາໃຫ້ພາວະນາເປັນພິເສດສຳລັບຜູ້ລ່ວງລັບ. ເພາະພວກເຮົາເຊື່ອວ່າຄວາມຕາຍບໍ່ແມ່ນຈຸດສຸດທ້າຍ, ແຕ່ແມ່ນຈຸດເລີ່ມຕົ້ນຂອງຊີວິດໃໝ່, ຊີວິດແຫ່ງການກັບເປັນຄືນມາຮ່ວມກັບພຣະເຢຊູເຈົ້າ. ແຕ່ເພື່ອຈະໄດ້ກັບເປັນຄືນມານັ້ນພວກເຮົາຕ້ອງໄດ້ເຊື່ອຢ່າງແທ້ຈິງໃນພຣະອົງ. ສິ່ງນີ້ບໍ່ແມ່ນເລື່ອງງ່າຍສຳລັບໝົດທຸກຄົນ. ດັ່ງພວກຊາດູເຊວໃນພຣະວໍລະສານວັນນີ້. ພວກເຂົາຕ່າງຈາກພວກຟາຣີເຊວຍ້ອນພວກເຂົາບໍ່ເຊື່ອວ່າມີການກັບເປັນຄືນມາຫລັງຄວາມຕາຍ. ດ້ວຍເຫດນີ້, ພວກເຂົາຈຶ່ງຄິດຫາແຕ່ສິ່ງຢູ່ໃນໂລກນີ້ ເຊັ່ນວ່າການແຕ່ງງານ ແລະການມີລູກສືບເຊື້ອສາຍ. ເພາະຖ້າພວກເຂົາຕາຍໄປກໍຈະມີຜູ້ສືບທອດຢູ່ສະເໝີ. ການສືບທອດຊີວິດແບບນີ້ຈຶ່ງເປັນສິ່ງສຳຄັນສຳລັບພວກເຂົາ. ເພາະສະນັ້ນ, ພວກເຂົາຈຶ່ງຖາມພຣະເຢຊູເຈົ້າກ່ຽວກັບເລື່ອງຍິງສາວທີ່ແຕ່ງງານກັບຊາຍໜຸ່ມເຈັດຄົນ ຍ້ອນບໍ່ມີລູກສືບທອດ. ແລະໃນວັນກັບເປັນຄືນມາ ຍິງນັ້ນຈະເປັນພັນລະຍາຂອງໃຜ? ສຳລັບພຣະເຢຊູເຈົ້າ, ຊີວິດຫລັງຄວາມຕາຍແມ່ນຊີວິດນິລັນດອນ. ແລະຊີວິດນິລັນດອນບໍ່ຄືກັບຊີວິດຊົ່ວຄາວຢູ່ໃນໂລກນີ້. ດ້ວຍເຫດນີ້ຖ້າຊີວິດຊົ່ວຄາວຢູ່ໃນໂລກນີ້ມີການແຕ່ງງານເພື່ອມີລູກສືບເຊື້ອສາຍ, ຊີວິດນິລັນດອນໃນໂລກໜ້າກໍຈະບໍ່ມີການແຕ່ງງານເພື່ອມີລູກສືບທອດ. ເພາະພວກເຮົາບໍ່ຕາຍອີກ. ແລະເມື່ອປາດສະຈາກຄວາມຕາຍແລ້ວ, ພວກເຮົາກໍບໍ່ຕ້ອງການມີລູກເພື່ອສືບເຊື້ອສາຍ. ສະຫລຸບແລ້ວ, ຊີວິດຫລັງຄວາມຕາຍ ຫລືຊີວິດນິລັນດອນນັ້ນແມ່ນຊີວິດທີ່ບໍ່ຕາຍອີກເລີຍ. ເພາະສະນັ້ນ, ເມື່ອພວກເຮົາຈາກໂລກນີ້ໄປແລ້ວ, ຖ້າພວກເຮົາໄດ້ກະທຳຄວາມດີຕາມຄຳສັ່ງສອນຂອງພຣະເຈົ້າ, ພວກເຮົາກໍຈະໄດ້ຢູ່ຮ່ວມສຸກກັບພຣະອົງຕະຫລອດນິລັນດອນ. ກົງກັນຂ້າມ, ຖ້າພວກເຮົາບໍ່ໄດ້ປະຕິບັດຕາມຄຳສັ່ງສອນຂອງພຣະເຈົ້າ, ພວກເຮົາກໍຈະໄດ້ຢູ່ໃນນະລົກຕະຫລອດນິລັນດອນເຊັ່ນດຽວກັນ.

ຂໍໃຫ້ວາຈາພຣະເຈົ້າວັນອາທິດນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈແຈ້ງກ່ຽວກັບການກັບເປັນຄືນມາໃນວັນສຸກທ້າຍແລະຊີວິດນິລັນດອນ. ເພາະຖ້າພວກເຮົາຢາກກັບເປັນຄືນມາເໝືອນກັບພຣະເຢຊູເຈົ້າ, ພວກເຮົາຕ້ອງເຊື່ອໃນພຣະອົງແລະປະຕິບັດຕາມຄຳສັ່ງສອນຂອງພຣະອົງ. ເພາະພຣະອົງແມ່ນການກັບເປັນຄືນມາແລະຊີວິດ, ຜູ້ໃດເຊື່ອໃນພຣະອົງແມ່ນວ່າຕາຍໄປແລ້ວ ກໍຈະໄດ້ກັບເປັນຄືນມາຮ່ວມກັບພຣະອົງ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ເຊື່ອໝັ້ນໃນວາຈາຂອງພຣະອົງ. ເພາະວາຈາພຣະອົງເປັນຫົນທາງ, ຄວາມຈິງແລະຊີວິດ. ແລະມີແຕ່ພຣະອົງເທົ່ານັ້ນທີ່ຈະຊ່ວຍລູກໃຫ້ກັບເປັນຄືນມາຈາກຄວາມຕາຍແລະມີຊີວິດຮ່ວມສຸກກັບພຣະອົງຕະຫລອດໄປ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ